ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ພາກລັດ-ທຸລະກິດ-ພາກສັງຄົມ ຫາລືການເຂົ້າເຖິງແຫຼ່ງທຶນ




ກົມຄຸ້ມຄອງສະຖາບັນການເງິນ, ທະນາຄານແຫ່ງ ສປປ ລາວ (ທຫລ) ແລະ ສະມາຄົມການເງິນຈຸລະພາກ (ສມກຈ) ໄດ້ຮ່ວມກັນຈັດກອງປະຊຸມການເຂົ້າເຖິງການບໍລິການທາງດ້ານການເງິນ ປະຈໍາປີ 2021 ໂດຍໄດ້ຮັບການສະໜັບສະໜູນຈາກອົງການ ADA ຂອງປະເທດລຸກຊໍາບວກ ຊຶ່ງຈັດຂຶ້ນໃນວັນທີ 22 ທັນວາ 2021 ຜ່ານລະບົບອອນລາຍ (Zoom) ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານ ພຸດທະໄຊ ສີວິໄລ ຮອງຜູ້ວ່າການ ທຫລ; ທ່ານ ພູຊົງ ຈັນທະຈັກ ຫົວໜ້າກົມຄຸ້ມຄອງສະຖາບັນການເງິນ; ຜູ້ຕາງໜ້າຈາກກະຊວງພາຍໃນ, ຄະນະສາຂາ ທຫລ ປະຈໍາພາກ, ທ່ານ ສົມພອນ ສີແສງລັດ ປະທານ ສມກຈ; ທ່ານ ນາງ ປະມອນ ເພັດທານີ ຜູ້ອໍານວຍການ ສມກຈ; ບັນດາອົງການຈັດຕັ້ງທັງພາຍໃນ, ຕ່າງປະເທດ ແລະພາກ ສ່ວນ ທີ່ກ່ຽວຂ້ອງໃນທົ່ວປະເທດ ເຂົ້າຮ່ວມ.

ກອງປະຊຸມໃນຄັ້ງນີ້ ເປັນກອງປະຊຸມປະຈໍາປີ ທີ່ຈັດຂຶ້ນໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ -19, ທີ່ທາງ ທຫລ ແລະ ສມກຈ ຮ່ວມກັນຈັດຂຶ້ນ ໂດຍໄດ້ກໍານົດເອົາຫົວຂໍ້ວ່າ: ການຂັບເຄື່ອນຂະແໜງການເງິນຈຸລະພາກ ຂ້າມຜ່ານສະພາບວິກິດໂຄວິດ-19 (Tackling the post-pandemic realities: Moving the Microfinance Industry Forward) ຊຶ່ງຈະເນັ້ນໃສ່ຜົນສໍາເລັດ ແລະບົດຮຽນທີ່ຖອດຖອນໄດ້ໃນການຈັດຕັ້ງປະຕິບັດ ແລະຜົນຂະ ທຍາຍບັນດາຄໍາສັ່ງ ແລະນິຕິກໍາ ທີ່ທາງລັດຖະບານ ແລະ ທກລ ກໍານົດອອກໃນໄລຍະຜ່ານມາ,

ກອງປະຊຸມ ໄດ້ເຊີນເອົາຜູ້ຄຸ້ມຄອງ, ບັນດາຊ່ຽວຊານພາຍໃນ ແລະ ຕ່າງປະເທດ, ຜູ້ຈັດຕັ້ງປະຕິບັດລວມທັງພາກສ່ວນທີ່ກ່ຽວຂ້ອງ, ຊຶ່ງທຸກພາກ ສ່ວນ ໄດ້ມີຄວາມພະຍາຍາມຂອງຂະແໜງການເງິນຈຸລະພາກ ແລະພາກສ່ວນຄູ່ຮ່ວມພັດທະນາ ທັງພາຍໃນ ແລະ ຕ່າງປະເທດ ເພື່ອເຮັດໃຫ້ລູກຄ້າ ໂດຍສະເພາະລູກຄ້າທີ່ເປັນຫົວ

ໜ່ວຍ MSMEs ໄດ້ຮັບການຟື້ນຟູຄືນສາມາດສືບຕໍ່ດຳເນີນທຸລະກິດຂອງຕົນໃນປະຈຸບັນ ແລະ ຕໍ່ໜ້າ; ຫົວຂໍ້ທີ່ນຳມາສົນທະນາໃນຄັ້ງນີ້ ໄດ້ປຶກສາຫາລືກັນ ໂດຍເນັ້ນໃສ່ເນື້ອໃນ 4 ຫົວຂໍ້ ຊຶ່ງມີເວທີສົນທະນາ 1.ສະພາບຄວາມເປັນຈິງແບບໃໝ່ ພາຍຫຼັງການແຜ່ລະບາດພະຍາດໂຄວິດ-19: ການສ້າງຄວາມເຂົ້າໃຈກ່ຽວກັບຜົນກະທົບຂອງພະຍາດ COVID-19 ແລະ ມາດຕະການຮັບມື; ຜົນສຳເລັດ ແລະ ບົດຮຽນ ກ່ຽວກັບການສະໜັບສະໜູນໃນການຟື້ນຟູວິກິດຈາກການແຜ່ລະບາດຂອງພະຍາດ COVID-19 ໃຫ້ແກ່ຂະແໜງການ MSME ; ການຊຸກຍູ້ການບໍລິການທີ່ນຳໃຊ້ເຕັກໂນໂລຊີ: ຂັບເຄື່ອນການບໍລິການທ່າມກາງການຫັນປ່ຽນສູ່ຍຸກດິຈິຕອລ; ຮັບປະກັນການປົກປ້ອງລູກຄ້າ: ການຊ່ວຍເຫຼືອລູກຄ້າ ເພື່ອຫຼີກລ້ຽງການກາຍເປັນໜີ້ສິນລົ້ນຕົວ.

# ຂ່າວ: ຣັດສະໝີ ດວງສັດຈະ




**ໃຊ້ເງິນກີບ ທົ່ວທັງຊາດ ສ້າງບົດບາດຄ່າເງິນລາວ**